# ທັດສະນະຄະຕິຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນຂອງອາຈານ ທີ່ມະຫາວິທະຍາໄລ ສຸພານຸວົງ

*ລຸນນີ ໂພທິຍາໄລ*, ສົມໃຈ ໄພຍະວົງ, ຢ່າງ ຊົ້າງ, ໂດມອນ ກອນປະຈິດ*

*ນັກສຶກສາ ປ. ໂທ ສາຂາ: ການສຶກສາ ແລະ ການພັດທະນາ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ*

---

***ບົດຄັດຫຍໍ້***

ບົດຄົ້ນຄ້ວານີ້ມີຈຸດປະສົງ: ສຶກສາຄວາມຄິດເຫັນຕໍ່ກັບການຈັດການຮຽນ-ການສອນຂອງອາຈານທີ່ມະຫາ ວິທະຍາໄລສຸພານຸວົງ ໂດຍການດຳເນີນການເກັບກຳຂໍ້ມູນຈາກນັກສຶກສາລະດັບປະລິນຍາຕີ ຊັ້ນປີທີ່ 2 - 5 ຂອງ 6 ຄະນະວິຊາໃນ ມສ (ຄະນະສຶກສາສາດ,ຄະນະພາສາສາດ, ຄະນະວິສະວະກຳສາດ, ຄະນະກະເສດສາດ ແລະ ຊັບພະຍາ ກອນປ່າໄມ້, ຄະນະສະຖາປັດຕະຍະກຳສາດ ແລະ ຄະນະເສດຖະສາດ ແລະ ການທ່ອງທ່ຽວ) ສົກສຶກສາ 2024-2025 ທັງໝົດຈານວນ 1,506 ຄົນ. ກຸ່ມຕົວຢ່າງຂອງການຄົ້ນຄວ້າແມ່ນນັກສຶກສາຈຳນວນ 225 ຄົນ, ກອບຄວາມຄິດໃນການຄົ້ນຄວ້າແບ່ງອອກເປັນ 6 ດ້ານຄື: ດ້ານເນື້ອໃນຫຼັກສູດ, ດ້ານເທັກນິກການສອນ, ດ້ານການຈັດກິດຈະກຳການຮຽນ-ການສອນ, ດ້ານໃຊ້ສື່ການສອນ, ດ້ານສະພາບການຮຽນ-ການສອນ ແລະ ດ້ານການວັດປະເມີນຜົນ, ສະຖິຕິທີ່ໃຊ້ໃນການຄົ້ນຄວ້າແມ່ນນຳໃຊ້ສະຖິຕິພັນລະນາ ເພື່ອຊອກຫາຄ່າຄວາມຖີ່, ເປີເຊັນ, ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ.

ຜົນການວິເຄາະພົບວ່າ: ການສຶກສາທັດສະນະຄະຕິຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນຂອງອາຈານ ແມ່ນຢູ່ໃນລະດັບດີ, ຈາກຄວາມຄິດເຫັນຂອງນັກສຶກສາກ່ຽວກັບ 6 ດ້ານຄື: 1.) ດ້ານເນື້ອໃນຫຼັກສູດ ແມ່ນມີຄວາມເໝາະສົມກັບຊັ້ນຮຽນ, 2.) ດ້ານເທັກນິກການສອນ ແມ່ນເລືອກໃຊ້ວິທີການສອນທີ່ຫຼາກຫຼາຍ, 3.) ດ້ານການຈັດກິດຈະກາການຮຽນ-ການສອນ ແມ່ນມີການຈັດກິດຈະກຳໃຫ້ນັກສຶກສາມີສ່ວນຮ່ວມໃນການສົນທະນາໃນຫ້ອງຮຽນ, 4.) ດ້ານການໃຊ້ສື່ການສອນ ແມ່ນມີຄວາມທັນສະໄໝທີ່ຊ່ວຍກະຕຸ້ນໃຫ້ຜູ້ຮຽນມີຄວາມສົນໃຈ, 5.) ດ້ານສະພາບແວດລ້ອມການຮຽນ-ການສອນ ແມ່ນມີຄວາມກວ້າງຂວາງ ແລະ ມີອາກາດຖ່າຍເທ, 6.) ດ້ານການວັດ ແລະ ປະເມີນຜົນ ແມ່ນມີການປະເມີນຜົນກ່ອນຮຽນ ແລະ ຫຼັງການຮຽນທຸກຄັ້ງທີ່ສອນ.

***ຄຳສັບສຳຄັນ:*** *ທັດສະນະຄະຕິຂອງນັກສຶກສາ, ດ້ານເນື້ອໃນຫຼັກສູດ, ດ້ານເທັກນິກການສອນ, ດ້ານການຈັດກິດຈະກຳການຮຽນ-ການສອນ*

**ລຸນນີ ໂພທິຍາໄລ ຄະນະສຶກສາສາດ ມ. ສຸພານຸວົງ Tel: 02077779558, E-mail: Lounny phothiyalay@gmail.com*

# Students' Attitudes towards the Teachers' Teaching and Learning at Souphanouvong University

*Lounny PHOTHIYALAY *, Somchay PHAIYAVONG, Yang CHANG, Domon KONEPACHIT*

*Majoring in: Education and Development, Faculty ofEducation, Souphanouvong University*

## ASTRACT

The purpose of this research is to study the satisfaction of the teaching and learning of teachers at Souphanouvong University by conducting data collection from undergraduate students in the second year to the fifth year of six faculties in Souphanouvong university (Faculty of Education, Faculty of Linguistics, Faculty of Engineering, Faculty of Agriculture and Forestry, Faculty of Architecture, and Faculty of Economics and Tourism), Academic year 2024-2025, total of 1,506 students. The sample group of the research is 225 students. The research framework is divided into 6 aspects: curriculum content, teaching techniques, teaching and learning activities, teaching media, teaching and learning conditions, and evaluation, The statistics used in the research are using the SPSS program to find frequency values, percentages, average values, standard deviation values, and comparative statistics. The study found that the students' attitude towards the teacher's teaching management is at a good level, from the students' opinions on 6 aspects: 1.) The content of the course is suitable for the class. 2.) The teaching technique is to use a variety of teaching methods; 3.) The organization of teaching-learning activities is to organize activities for students to participate in class discussions. 4.) The use of teaching materials is modern, which helps stimulate students' interest; 5.) The teaching-learning environment is wide and airy. 6.) Measurement and evaluation are evaluated before and after each lesson.

***Key words**: students' attitudes, curriculum content, teaching techniques, teaching and learning activities*

## 1. ພາກສະເໜີ

ການສຶກສາ ແມ່ນການນຳເອົາຄວາມຮູ້ໄປນຳໃຊ້ໃຫ້ເກີດປະໂຫຍດຕໍ່ສັງຄົມ ໂດຍຖືເອົາການສຶກສາເປັນວຽກງານໃນການພັດທະນາຊັບພະຍາກອນມະນຸດ, ຖືເອົາຄວາມສຳຄັນຂອງການພັດທະນາຄົນທາງດ້ານສິນທຳປະຕິວັດ, ຊີວະທັດ,ໂລກະທັດ, ວິທະຍາສາດ ແລະ ຄວາມກ້າວໜ້າ ຄື: ການສ້າງຄົນໃຫ້ມີຄວາມຮູ້ຄວາມສາມາດ, ຮູ້ຄິດ, ມີອາຊີບ, ສ້າງສັງຄົມໃຫ້ມີການຮຽນຮູ້, ເສດຖະກິດແຫ່ງພູມປັນຍາເທື່ອລະກ້າວ (ກົດໝາຍວ່າດ້ວຍການສຶກສາ ສະບັບປັບປຸງ, 2015).

ວິໄສທັດການພັດທະນາການສຶກສາ ແລະ ກິລາ ຮອດປີ 2030 ພົນລະເມືອງລາວທຸກຄົນໄດ້ຮັບການສຶກສາທີ່ມີຄຸນນະພາບຢ່າງສະເໝີພາບ ແລະ ເທົ່າທຽມກັນເພື່ອໃຫ້ເຂົາເຈົ້າໄດ້ພັດທະນາຕົນເອງກາຍເປັນພົນລະເມືອງດີຂອງຊາດມີຄຸນສົມບັດມີສຸຂະພາບເຂັ້ມແຂງມີຄວາມຮູ້, ຄວາມສາມາດສູງ, ມີຄວາມເປັນມືອາຊີບເພື່ອພັດທະນາປະເທດຊາດໃຫ້ສີວິໄລຍິນຍົງ ສາມາດເຊື່ອມໂຍງແຂ່ງຂັນກັບພາກພື້ນ ແລະ ສາກົນໄດ້; ເພື່ອບັນລຸວິໄສດັ່ງກ່າວກະຊວງສຶກສາທິການ ແລະ ກິລາ ຕ້ອງເອົາໃຈໃສ່ 8 ພະລະກິດເຊິ່ງໃນນັ້ນ ພາລະກິດທີ 3: ສົ່ງເສີມການຮຽນການສອນວິຊາຊີບຂັ້ນພື້ນຖານ ຢູ່ຊັ້ນມັດທະຍົມສຶກສາ, ປັບປຸງລະບົບການສຶກສາສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ, ໂດຍເອົາໃຈໃສ່ປັບປຸງດ້ານຄຸນນະພາບ ພ້ອມທັງຮັບປະກັນໃຫ້ນັກຮຽນ, ນັກສຶກສາມີທັກສະແທດເໝາະກັບຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ຮັບປະກັນໃຫ້ຜູ້ຮຽນຈົບມີຄວາມສາມາດເຂົ້າສູ່ກຳລັງແຮງງານໃດ; ພາລະກິດທີ 6 ການນາໃຊ້ໄອຊີທີເປັນເຄື່ອງມືໃນການຄຸ້ມຄອງ ແລະ ບໍລິຫານການສຶກສາ ແລະ ກິລາ, ການຮຽນ ການສອນ ແລະ ປັບປຸງຄຸນນະພາບການສຶກສາ; ພາລະກິດທີ 7 ຂະຫຍາຍວຽກງານຄົ້ນຄວ້າວິໄຈ ແລະ ປະເມີນຜົນນະໂຍບາຍ ແລະ ຍຸດທະສາດ ໃຫ້ກວ້າງຂວາງແຕ່ສູນກາງລົງຮອດທ້ອງຖິ່ນ. ໃນນັ້ນ ທິດທາງລວມຂອງວິໄສທັດ ແມ່ນພັດທະນາຊັບພະຍາກອນມະນຸດໃຫ້ໄດ້ຕາມ 3 ລັກສະນະ ແລະ 5 ຫຼັກມູນຂອງການສຶກສາ ພ້ອມທັງຮັບປະກັນໃຫ້ມີທັກສະ ແລະ ຄວາມຮູ້ຄວາມສາມາດນຳໃຊ້ວິທະຍາສາດ, ເທັກໂນໂລຢີ, ຂໍ້ມູນຂ່າວສານ, ການສື່ສານ ແລະພາສາຕ່າງປະເທດຢ່າງເປັນຮູບປະທຳ; ສຸມໃສ່ເຮັດໃຫ້ການພັດທະນາຊັບພະຍາກອນມະນຸດມີຄຸນນະພາບ, ມີສີມື ແລະ ມີຄວາມຊຳນິຊຳນານ ເພື່ອສາມາດຕອບສະໜອງໄດ້ຄວາມຕ້ອງການ

ຂອງຜູ້ປະກອບການໃນແຕ່ລະໄລຍະທາງດ້ານປະລິມານ ແລະ ຄຸນນະພາບ (ວິໄສທັດຮອດປີ 2030 ແລະ ຍຸດທະສາດ ການພັດທະນາເສດຖະກິດ - ສັງຄົມ ໄລຍະ 10 ປີ (2016-2025), 2016)

ເປົ້າໝາຍລວມສຳລັບ 2021 - 2025 ພາຍໃນປີ 2025 ຂະແໜງການສຶກສາ ແລະ ກິລາ ຢູ່ ສປປລາວ ມີໂຄງສ້າງ ແລະ ມີຊັບພະຍາກອນທີ່ເໝາະສົມເພື່ອເຮັດໃຫ້ພົນລະເມືອງລາວທຸກຄົນເຂົ້າເຖິງການສຶກສາ ແລະ ກິລາ - ກາຍຍະກຳ ທີ່ມີຄຸນນະພາບ ເພື່ອເຮັດໃຫ້ປະເທດຊາດໄດ້ຮັບຜົນປະໂຫຍດຈາກການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ ແລະ ຊຸກຍູ້ເພື່ອບັນລຸການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ທີ 4 (ກະຊວງສຶກສາທິການ ແລະ ກິລາ , 2020)

ມະຫາວິທະຍາໄລ ໃນ ສປປລາວ ເຊິ່ງໄດ້ປະຕິບັດໜ້າທີ່ໃນການຈັດຕັ້ງການສຶກສາພັດທະນາການສຶກສາຊັ້ນສູງເປັນຢ່າງດີ, ທັງໄດ້ມີການພັດທະນາ ແລະ ຂະຫຍາຍຕົວດີພໍສົມຄວນ ແຕ່ເມື່ອສັງເກດເຫັນຈາກທັດສະນະຂອງຄວາມຕ້ອງການຂອງສັງຄົມແມ່ນຍັງພົບບັນຫາເຫັນດັ່ງນີ້:

- ບັນຫາການປັບປຸງຄຸນນະພາບການສຶກສາ ແລະ ຄວາມສອດຄ່ອງໃນການພັດທະນາການສຶກສາຊັ້ນສູງແມ່ນສິ່ງທ້າທາຍທຳອິດ, ບັນຫາການລົງທຶນການພັດທະນາວຽກງານການສຶກສາຊັ້ນສູງ ໃນໄລຍະຜ່ານມາ ແລະ ປະຈຸບັນຍັງບໍ່ພຽງພໍ ແລະ ຍັງມີບັນຫາອື່ນໆຈຳນວນໜຶ່ງ (ກະຊວງສຶກສາທິການ ແລະ ກິລາ, 2020)
- ຄູອາຈານ-ພະນັກງານຈຳນວນໜຶ່ງບໍ່ໄດ້ລົງເລິກວິຊາສະເພາະເທົ່າທີ່ຄວນ, ຄວາມຮັບຜິດຊອບຕໍ່ອາຊີບຍັງບໍ່ທັນສູງ, ການສິດສອນເໜັ້ນໃສ່ ພາກທິດສະດີຫລາຍ ຂາດພາກປະຕິບັດ, ການສຶກສາຄົ້ນຄວ້າ ແລະ ການພັດທະນາຕົນເອງຍັງບໍ່ເທົ່າທັນກັບ ການປ່ຽນແປງຂອງພາກພື້ນ ແລະ ສາກົນ; ການຈັດຕັ້ງປະຕິບັດຫຼັກສູດ ແລະ ການຈັດຕັ້ງການຮຽນ-ການສອນ ຂອງສະຖາບັນການສຶກສາຊັ້ນສູງຍັງບໍ່ທັນຕອບສະໜອງໄດ້ຕາມຄວາມຕ້ອງການຂອງຕະຫຼາດແຮງງານເທົ່າທີ່ຄວນ; ຄູສອນຈຳນວນໜຶ່ງຍັງສອນຫຼາຍວິຊາ ແລະ ເຮັດວຽກ 2 ໜ້າທີ່ ເຊັ່ນ: ບໍລິຫານ ແລະ ວິຊາການ. ຄູປະຈຳຫ້ອງບາງຄົນຍັງລະເລີຍຕໍ່ໜ້າທີ່ເປັນຕົ້ນແມ່ນການກວດກາ ແລະ ການໃຫ້ຄຳປຶກສາຫາລືແກ່ນັກສຶກສາທີ່ຕົນເອງຮັບຜິດຊອບ ເຮັດໃຫ້ຕົວເລກນັກສຶກສາໂຈະການຮຽນ ແລະ ປະລະການຮຽນມີສູງ (ກະຊວງສຶກສາທິການ ແລະ ກິລາ, 2020)

ໃນການສຶກສາກ່ຽວກັບ "ອານາຄົດຂອງມະຫາວິທະຍາໄລໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ" ສະຫຼຸບໄດ້ວ່າ: ດ້ານຜູ້ບໍລິຫານ, ດ້ານອາຈານ ແລະ ດ້ານການອານຸລັກວັດທະນະທຳມີຄວາມຈຳເປັນຕ້ອງໄດ້ຮັບການພັດທະນາ (Khamphao Chanphengxay, 2019)

ມະຫາວິທະຍາໄລ ສຸພານຸວົງ ແມ່ນໜຶ່ງໃນສີ່ມະຫາວິທະຍາໄລຂອງລາວ ໂດຍໄດ້ຮັບການສ້າງຕັ້ງຂຶ້ນຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 169/ນຍ, ລົງວັນທີ 04 ພະຈິກ 2003 ແລະ ໄດ້ໄຂສົກຮຽນຄັ້ງປະຖົມມະລຶກ ໃນວັນທີ 5 ພະຈິກ 2003. ປັດຈຸບັນມະຫາວິທະຍາໄລສຸພານຸວົງ ປະກອບມີ 6 ຄະນະວິຊາ ແລະ ມີ 61 ຫຼັກສູດທີ່ຈັດຕັ້ງການຮຽນ-ການສອນຄື: ລະດັບປະລິນຍາຕີມີ 41 ຫຼັກສູດວິຊາ, ລະດັບຕໍ່ເນື່ອງປະລິນຍາຕີ 12 ຫຼັກສູດວິຊາ ແລະ ປະລິນຍາໂທ 7 ຫຼັກສູດວິຊາ (ມະຫາວິທະຍາໄລ ສຸພານຸວົງ, 2024)

ຄູເປັນຜູ້ທີ່ມີບົດບາດສຳຄັນໃນການສິດສອນກໍ່ຄືການພັດທະນາຊັບພະຍາກອນມະນຸດໂດຍສິດສອນຖ່າຍທອດວິຊາຄວາມຮູ້, ຄວາມສາມາດ, ສະຕິປັນຍາ, ຄວາມເປັນແບບຢ່າງໃຫ້ແກ່ຜູ້ສຶກສາຮໍ່າຮຽນຖ້າບໍ່ມີຄູຄົນເຮົາກໍ່ບໍ່ມີຄວາມຮູ້ ແລະ ບໍ່ມີໃຜໃນໂລກນີ້ຈະປະຕິເສດບົດບາດຂອງຄູໄດ້ນັບແຕ່ພະນັກງານຂັ້ນສູງ ຫຼື ນັກທຸລະກິດຜູ້ທີ່ປະສົບຜົນສຳເລັດໂດຍປາສະຈາກຄູ. ຈັນຍາບັນຂອງຄູລາວປະກອບດ້ວຍ 05 ຄຸນລັກສະນະຫຼັກຄື: ຊື່ສັດບໍລິສຸດ,ຮັກອາຊີບ, ຮັກແພງຜູ້ຮຽນ, ເປັນແບບຢ່າງນຳໜ້າ ແລະ ພັດທະນາຕົນເອງ, ຄູ ແລະ ບຸກຄະລາກອນການສຶກສາໄດ້ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄວາມພ້ອມ, ມີຄວາມຮູ້-ຄວາມສາມາດ, ມີຈັນຍາບັນ, ຮັກອາຊີບຄູ, ບໍ່ຄອນແຄນ, ສະແຫວງຊອກຮູ້ຮໍ່າຮຽນ, ມີແນວຄິດພັດທະນາຕົນເອງ ແລະ ສັງຄົມ, ມີນໍ້າໃຈເສຍສະຫຼະ, ຫ້າວຫັນ-ດຸໝັ່ນ ແລະ ມີບຸກຄະລິກດີ ຄືເປັນແບບຢ່າງທີ່ດີເປັນຕົ້ນ.

ດັ່ງນັ້ນ ຜູ້ສຶກສາຈຶ່ງມີຄວາມສົນໃຈສຶກສາ **"** ທັດສະນະຄະຕິຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນຂອາຈານ ຢູ່ທີ່ ມະຫາວິທະຍາໄລ ສຸພານຸວົງ**"** ໂດຍຂໍ້ມູນທີ່ໄດ້ຈາກການສຶກສາໃນຄັ້ງນີ້ ຫັວງວ່າຈະເປັນແນວທາງໃນການພັດທະນາການປະຕິບັດວຽກງານການສຶກໃນຕໍ່ໜ້າ ຂອງມະຫາວິທະຍາໄລ ສຸພານຸວົງ ໃຫ້ມີປະສິດພາບ ແລະ ປະສິດທິຜົນດີຂຶ້ນໄປເລື້ອຍໆ.

## 2. ບົດຄົ້ນຄ້ວາທີ່ກ່ຽວຂ້ອງ

ໃນການສຶກສາທັດສະນະຄະຕິຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນຂອງອາຈານຢູ່ທີ່ ມະຫາວິທະຍາໄລ ສຸ

ພານຸວົງ. ຜູ້ສຶກສາໄດ້ສຶກສາງານວິໄຈທີ່ກ່ຽວຂ້ອງ ເພື່ອນໍາມາໃຊ້ເປັນແນວທາງໃນການສຶກສາ ດັ່ງນີ້.

❖ ງານວິໄຈພາຍໃນ

ສິນໄລ ອໍ່ຕ່ອງຫ້ອນ ແລະ ມະນີວັນ ຈັນທະບຸນເຮືອງ ( 2015) ວິໄຈເລື່ອງ " ສຶກສາທັດສະນະຄະຕິຂອງນັກຮຽນຫ້ອງພອນສະຫວັນທີ່ມີຕໍ່ວິຊາຄະນິດສາດຊັ້ນມັດທະຍົມສຶກສາຕອນປາຍທີ່ໂຮງຮຽນມັດທະຍົມສົມບູນສັນຕິພາບ ເມືອງຫຼວງພະບາງ ແຂວງຫຼວງພະບາງ ສົກ 2014-2015 ຜົນການວິໄຈໃນແຕ່ລະດ້ານພົບວ່າ: ດ້ານຄວາມຮູ້-ຄວາມເຂົ້າໃຈແມ່ນມີທັດສະນະຄະຕິຢູ່ໃນລະດັບເຫັນພ້ອມຫຼາຍ, ດ້ານຄວາມຮູ້ສຶກແມ່ນມີທັດສະນະຄະຕິຢູ່ໃນລະດັບພໍໃຈຫຼາຍ ແລະ ດ້ານພຶດຕິກໍາແມ່ນມີທັດສະນະຄະຕິຢູ່ໃນລະດັບປະຕິບັດຫຼາຍ.

ພຣະຄໍາ ແສງຄັນທະສີລີ (2011) ໄດ້ສຶກສາກ່ຽວກັບການຈັດການຮຽນ-ການສອນຕາມຫຼັກສູດວິຊາຊີບວິທະຍາໄລເຕັກນິກ ປາກປ່າສັກ. ການຄົ້ນຄວ້າໃນຄັ້ງນີ້ມີຈຸດປະສົງ: 1) ເພື່ອສຶກສາການຈັດການຮຽນ-ການສອນຫຼັກສູດ, 2) ເພື່ອປຽບທຽບລະດັບຄວາມຄິດເຫັນຕໍ່ການຮຽນ-ການສອນ, 3) ເພື່ອສຶກສາບັນຫາ ແລະ ວິທີແກ້ໄຂໃນການຮຽນ-ການສອນ. ເຄື່ອງມືວິໄຈທີ່ໃຊ້ໃນການຄົ້ນຄວ້ານີ້ແມ່ນແບບສອບຖາມປະຊາກອນທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້.ແມ່ນນັກສຶກສາວິທະຍາໄລເຕັກນິກປາກປ່າສັກນະຄອນຫຼວງວຽງຈັນ ຈໍານວນ 365 ຄົນ ແລະ ການວິເຄາະຂໍ້ມູນຄອມພິວເຕີໂດຍນໍາໃຊ້ໂຄງການທີ່ກຽມພ້ອມເພື່ອຊອກຫາຄວາມຖີ່, ສ່ວນຮ້ອຍ, ຄ່າສະເລ່ຍ, ແລະ ຄ່າຜັນປ່ຽນມາດຕະຖານຂອງສະຖິຕິການທົດສອບ t ແລະ ສະຖິຕິ f-test.

ແສງດາລາ ບົວລາຄໍາ (2020)ໄດ້ສຶກສາປັດໄຈຄວາມເພິ່ງພໍໃຈຂອງນັກສຶກສາ ຄະນະສຶກສາສາດ ຕໍ່ການບໍລິຫານຈັດການ ຂອງຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ. ຈາກຜົນການສຶກສາ ສາມາດຈັດລະດັບຄວາມເພິ່ງພໍໃຈຈາກຫຼາຍໄປຫາໜ້ອຍຄື: ດ້ານການປະເມີນແມ່ນຢູ່ໃນລະດັບຫຼາຍ, ດ້ານສະພາບແວດລ້ອມ, ດ້ານຫຼັກສູດ, ດ້ານຄວາມຄາດຫວັງໃນການປະກອບອາຊີບພາຍຫຼັງຮຽນຈົບ, ດ້ານຕົວນັກສຶກສາ, ດ້ານການສອນຂອງອາຈານ, ດ້ານກິດຈະກໍານັກສຶກສາ, ດ້ານການບໍລິການວິຊາການແມ່ນ, ສ່ວນລະດັບສຸດທ້າຍແມ່ນດ້ານສື່ການສອນ, ອຸປະກອນການຮຽນ-ການສອນແມ່ນຢູ່ໃນລະດັບປານກາງ. ໂດຍລວມແລ້ວລະດັບຄວາມເພິ່ງພໍໃຈນັກສຶກສາຄະນະສຶກສາສາດຕໍ່ການບໍລິຫາຈັດການ ຂອງຄະນະສຶກສາສາດມະຫາວິທະຍາໄລ ສຸພານຸວົງ ໃນອົງປະກອບ 5 ດ້ານແມ່ນຢູ່ໃນລະດັບຫຼາຍ.

ໜຽວ ສີລາວົງ (2012)ໄດ້ສຶກສາກ່ຽວກັບຄວາມເພິ່ງພໍໃຈກັບສະພາບແວດລ້ອມການຮຽນຮູ້ຂອງນັກສຶກສາວິທະຍາໄລອາຊີວະສຶກສາຂັ້ນພື້ນຖານ ມະຫາວິທະຍາໄລແຫ່ງຊາດ ທັງ 4 ດ້ານຄື: ລັກສະນະພຶດຕິກໍາຂອງຄູສອນ,ດ້ານພຶດຕິກໍາຂອງນັກຮຽນ , ດ້ານພຶດຕິກໍາຂອງເພື່ອນໃນຫ້ອງ ແລະ ດ້ານອາຄານສະຖານທີ່ຫ້ອງຮຽນສື່ການຮຽນ-ການສອນ ສະຫຼຸບແລ້ວ, ນັກຮຽນມີຄວາມພໍໃຈກັບສະພາບແວດລ້ອມການຮຽນໂດຍລວມແມ່ນຢູ່ໃນລະດັບດີ. ເມື່ອພິຈາລະນາແຕ່ລະດ້ານປະກົດວ່າຄວາມເພິ່ງພໍໃຈກັບສະພາບແວດລ້ອມແມ່ນຢູ່ໃນລະດັບປານກາງໂດຍມີການຈັດລໍາດັບຈາກຄະແນນສະເລ່ຍສູງສຸດຫາຕ◌່◌ໍາສຸດຄື: ພຶດຕິກໍາຂອງຄູອາຈານຜູ້ສອນ ລັກສະນະພຶດຕິກໍາຂອງນັກຮຽນ ແລະ ມັນຢູ່ໃນລະດັບດີ, ໃນນັ້ນ ຄະແນນສະເລ່ຍຈາກສູງສຸດເຖິງຕ◌່◌ໍາແມ່ນການພຶດຕິກໍາຂອງຫມູ່ໃນຫ້ອງຮຽນ , ອາຄານສະຖານທີ່ໃນຫ້ອງຮຽນ ແລະ ສື່ການຮຽນການສອນ.

Phra Surachai Surachayo (Hongtrakool) (2555)ໄດ້ສຶກສາ ທັດສະນະຄະຕິຂອງນັກຮຽນຕໍ່ການຮຽນ - ການສອນຂອງພະສອນສິນທໍາ ຢູ່ໃນໂຮງຮຽນປະຖົມສຶກສາ ອໍາເພີເມືອງ, ຈັ່ງຫວັດນົນທະບູລີ. ຜົນການສຶກສາສະຫຼຸບໄດ້ດັ່ງນີ້: 1) ທັດສະນະຄະຕິຂອງນັກຮຽນຕໍ່ການຮຽນ - ການສອນຂອງພະສອນສິນທໍາ ຢູ່ໃນໂຮງຮຽນໂດຍລວມ ແລະ ລາຍດ້ານ ນັກຮຽນມີທັດສະນະຄະຕິຢູ່ໃນລະດັບສູງ ເຊິ່ງດ້ານທີ່ມີຄ່າສະເລ່ຍສູງສຸດແມ່ນດ້ານເນື້ອໃນຂອງຫຼັກສູດ, ຮອງລົງມາແມ່ນດ້ານເທັກນິກການສອນ ແລະ ດ້ານການຈັດສະພາບແວດລ້ອມການຮຽນ-ການສອນຕາມລໍາດັບ, ສ່ວນດ້ານທີ່ນັກຮຽນມີທັດສະນະຄະຕິຢູ່ໃນລະດັບຕໍ່າສຸດ ແມ່ນດ້ານການຈັດກິດຈະກໍາການຮຽນ-ການສອນ. 2) ການປຽບທຽບທັດສະນະຄະຕິຂອງນັກຮຽນຕໍ່ກັບການສອນ ພະສອນສິນທໍາໃນໂຮງຮຽນ, ຈໍາແນກຕາມເພດ, ອາຍຸ, ລະດັບຊັ້ນຮຽນ ແລະ ຂະໜາດໂຮງຮຽນທັງໝົດ ໂດຍລວມ ພົບວ່າ ນັກຮຽນມີທັດສະນະຄະຕິບໍ່ແຕກຕ່າງກັນຫຼາຍທີ່ລະດັບ 0.05 ເມື່ອພິຈາລະນາເປັນລາຍດ້ານ ພົບວ່າ ຈໍາແນກຕາມເພດ, ດ້ານເນື້ອໃນຂອງຫຼັກສູດ, ນັກຮຽນມີທັດສະນະຄະຕິແຕກຕ່າງກັນ.

Miss Kewalee Phungdee (2556)ໄດ້ສຶກສາຄວາມເພິ່ງພໍໃຈທີ່ມີຕໍ່ການຈັດການຮຽນການສອນໃນຫຼັກສູດຂອງພາກວິຊາສະຖິຕິ ຄະນະວິທະຍາສາດ ມະຫາວິທະຍາໄລຂອນແກ່ນ. ຜົນການສຶກສາພົບວ່າ: ທັງໝົດ 5 ດ້ານແມ່ນຢູ່ໃນລະດັບດີ, ໂດຍຈັດອັນດັບສະເລ່ຍຂອງແຕ່ລະດ້ານຈາກສູງສຸດຫາຕໍ່າສຸດໄດ້ດັ່ງນີ້: 1) ດ້ານຫຼັກສູດ, 2) ດ້ານວິທີການສິດສອນ ແລະ ການເຄື່ອນໄຫວການຮຽນການສອນ, 3) ດ້ານຄູສອນ, 4) ດ້ານການວັດແທກ ແລະ

ປະເມີນຜົນການຮຽນ-ການສອນ ແລະ 5) ດ້ານປັດໃຈສະໜັບສະໜູນການຮຽນ - ການສອນ.

Kitja Wesprachum (2552) ໄດ້ສຶກສາຄົ້ນຄວ້າກ່ຽວກັບບັນຫາ ແລະ ຄວາມຕ້ອງການ ການຮຽນການສອນຫຼັກສູດວິຊາຊີບໄລຍະສັ້ນທີ່ວິທະຍາໄລສາລະພັດຊ່າງ ບາງກອກ ຜົນໄດ້ຮັບຂອງການຄົ້ນຄວ້ານີ້ເຮັດໃຫ້ເພື່ອເຂົ້າໃຈຄວາມຮັບຮູ້ຂອງຜູ້ບໍລິຫານ, ຄູອາຈານ ແລະ ນັກຮຽນຜູ້ໃຫຍ່ກ່ຽວກັບເງື່ອນໄຂ, ບັນຫາ ແລະ ຄວາມຕ້ອງການ. ການຮຽນ-ການສອນວິຊາຊີບໄລຍະສັ້ນ ທີ່ວິທະຍາໄລເຕັກນິກບາງກອກ ໃນ 6 ຂົງເຂດນັ້ນແມ່ນ , ໃນດ້ານຫຼັກສູດ ແລະ ກິດຈະກຳການຮຽນ-ການສອນ. ໃນແງ່ຂອງຄູອາຈານ ໃນດ້ານສື່ການສອນ, ການວັດ ແລະ ປະເມີນຜົນ ແລະ ສະຖານທີ່ຂອງການນຳໃຊ້ ແລະ ການຝຶກອົບຮົມ ເຊິ່ງເປັນຂໍ້ມູນເພື່ອນຳໃຊ້ເຂົ້າໃນການພັດທະນາການຮຽນ-ການສອນຫຼັກສູດວິຊາຊີບໄລຍະສັ້ນ ເພື່ອໃຫ້ມີປະສິດທິພາບຫຼາຍຂຶ້ນ.

Piyawan SICHIANG (2556) ໄດ້ສຶກສາທັດສະນະຄະຕິຂອງທີ່ມີຕໍ່ສະພາບແວດລ້ອມຂອງຄະນະອຸດສາຫະກຳເຄື່ອງທໍຜ້າ ແລະ ອອກແບບແຟຊັ່ນ ມະຫາວິທະຍາໄລ ເຕັກໂນໂລຍີ ຣາຊະມົງຄຸນພະນະຄອນ. ການວິໄຈໃນຄັ້ງນີ້ມີຈຸດປະສົງເພື່ອ: ສຶກສາໂດຍລວມ ແລະ ໃນແຕ່ລະດ້ານ 5ດ້ານຄືດ້ານອາຈານຜູ້ສອນ, ດ້ານການຈັດການຮຽນການສອນ, ດ້ານອາຄານສະຖານທີ່, ດ້ານການບໍລິການນັກສຶກສາ ແລະ ດ້ານກິດຈະກຳນັກສຶກສາ; ຈາກຜົນການສຶກສາສະຫຼຸບໄດ້ດັ່ງນີ້: ນັກສຶກສາລະດັບປະລິຍາຕີມີຄວາມຄິດເຫັນຕໍ່ສະພາບແວດລ້ອມຂອງຄະນະອຸດສາຫະກຳເຄື່ອງທໍຜ້າ ແລະ ອອກແບບແຟຊັ່ນ ມະຫາວິທະຍາໄລ ເຕັກໂນໂລຍີ ຣາຊະມົງຄົນພະນະຄອນ ໂດຍລວມ ແມ່ນຢູ່ໃນລະດັບທີ່ເໝາະສົມປານກາງ ເມື່ອພິຈາລະນາແຕ່ລະດ້ານ, ພົບວ່ານັກສຶກສາລະດັບປະລິນຍາຕີມີຄວາມຄິດເຫັນກ່ຽວກັບດ້ານສິ່ງແວດລ້ອມ, ດ້ານການອາຈານສອນ ແລະ ດ້ານການຈັດການຮຽນ - ການສອນ ມີຄວາມເໝາະສົມໃນລະດັບຫຼາຍ, ສ່ວນດ້ານອາຄານສະຖານທີ່ ແລະ ສິ່ງອຳນວຍຄວາມສະດວກ ແລະ ດ້ານກິດຈະກຳນັກສຶກສາ ແມ່ນມີຄວາມເໝາະສົມໃນລະດັບປານກາງ.

ສັກກະລິນ ຢູ່ຜ່ອງ (2555) ໄດ້ສຶກສາກ່ຽວກັບ "ການພັດທະນາຫຼັກສູດຝຶກອົບຮົມການສ້າງແຜນການສອນທີ່ໃຊ້ສື່ຮູບພາບການເຄື່ອນໄຫວສຳລັບວິຊາຊີບ ສາຂາຊ່າງອຸດສາຫະກຳ ຢູ່ທີ່ມະຫາວິທະຍາໄລບັນດິດ (ສະຖາບັນເທັກໂນໂລຍີພະຈອມເກົ້າພະນະຄອນເໜືອ) " ການສຶກສາໃນຄັ້ງນີ້ມີຈຸດປະສົງເພື່ອ ສຶກສາການສ້າງແຜນການສອນໂດຍການນຳໃຊ້ສື່ຮູບພາບການເຄື່ອນໄຫວສຳລັບອາຊີບອຸດສາຫະກຳ ແລະ ສາມາດໃຊ້ສື່ຮູບພາບການເຄື່ອນໄຫວເຂົ້າໃນການຝຶກອົບຮົມຄູ, ໂດຍຜົນການວິເຄາະຂໍ້ມູນ ນັກຄົ້ນຄວ້າໄດ້ດຳເນີນການຄົ້ນຄ້ວາໂດຍການປະເມີນຜົນການພັດທະນາຫຼັກສູດການຝຶກອົບຮົມໃນທຸກຂັ້ນຕອນແມ່ນໄດ້ປະຕິບັດໂດຍນຳໃຊ້ຮູບແບບການປະເມີນຜົນ CIPPມາປະເມີນທຸກຂັ້ນຕອນ.

ອຸດົມ ໄຊແກ້ວວົງ (2560) ໄດ້ການສຶກສາໃນຄັ້ງນີ້ມີຈຸດປະສົງເພື່ອ ສຶກສາການຈັດການຮຽນ-ການສອນລະຫວ່າງນັກຮຽນ ແລະ ອາຈານກ່ອນຈະເລີ່ມເຮັດກິດຈະກຳການຮຽນ-ການສອນ ຜູ້ຮຽນຕ້ອງມີຄວາມເຂົ້າໃຈ ໃນຈຸດປະສົງການຮຽນຮູ້, ກິດຈະກຳການຮຽນຮູ້ຕ້ອງມີການໃຊ້ສື່ທີ່ຫຼາກຫຼາຍ ໂດຍທີ່ຜູ້ຮຽນສາມາດສ້າງຂຶ້ນເອງ ແລະ ຄວນມີການອະທິບາຍທີ່ຫຼີກລ້ຽງເວລາທີ່ຕາຍຕົວ ແລະ ຈະຕ້ອງມີການກວດສອບຂໍ້ມູນທີ່ຊັດເຈນ.

## 3. ວິທີການດຳເນີນການຄົ້ນຄວ້າຄົ້ນຄວ້າ

*3.1 ວິທີການເກັບກຳຂໍ້ມູນ*

- ❖ ປະຊາກອນ: ທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ ແມ່ນນັກສຶກສາປະລິນຍາຕີປີ 2 – 5 ຂອງ 6ຄະນະວິຊາຂອງມະຫາວິທະຍາໄລ ສຸພານຸວົງ (ຄສສ, ຄກປ, ຄສທ, ຄວສ, ຄປກ ແລະ ຄພສ) ສົກສຶກສາ 2024 - 2025 ທັງໝົດ ຈຳນວນ 1,506 ຄົນ.
- ❖ ກຸ່ມຕົວຢ່າງ: ທີ່ໃຊ້ໃນການສຶກສາຄັ້ງນີ້ ແມ່ນນັກສຶກສາປະລິນຍາຕີປີ 2 – 5 ຂອງ 6ຄະນະວິຊາຂອງມະຫາວິທະຍາໄລ ສຸພານຸວົງ (ຄສສ, ຄກປ, ຄສທ, ຄວສ, ຄປກ ແລະ ຄພສ) ສົກສຶກສາ 2024 - 2025 ທັງໝົດ ຈຳນວນ 225 ຄົນ. ເຊິ່ງໄດ້ຈາກການນຳໃຊ້ສູດຄິດໄລ່ອີງຕາມເກນສ່ວນຮ້ອຍ ແລະ ເທັກນິກການເລືອກແບບສະດວກ.
- ❖ ເຄື່ອງມື: ທີ່ໃຊ້ໃນການສຶກສາວິໄຈໃນຄັ້ງນີ້ ເປັນແບບສອບຖາມທີ່ຜູ້ສຶກສາສ້າງຂຶ້ນຈາກການສຶກສາແນວຄິດ ແລະ ທິດສະດີຕ່າງໆ ແລະ ງານວິໄຈທີ່ກ່ຽວຂ້ອງ, ໂດຍແບບສອບຖາມມີທັງໝົດ 2 ພາກສ່ວນ ດັ່ງນີ້:

<u>ພາກສ່ວນທີ 1</u>: ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ລັກສະນະຂອງຄຳຖາມແຕ່ລະຂໍ້ເປັນແບບສຳຫຼວດລາຍການ (Check list) ປະກອບດ້ວຍ: ເພດ, ອາຍຸ, ຊັ້ນຮຽນ ແລະ ຄະນະ.

<u>ພາກສ່ວນທີ 2</u>: ຂໍ້ມູນກ່ຽວກັບຄວາມຄິດເຫັນຂອງນັກສຶກສາລະດັບປະລິນຍາຕີ ຕໍ່ກັບການຈັດການຮຽນ-ການສອນຂອງອາຈານຢູ່ທີ່ ມະຫາວິທະຍາໄລ ສຸພານຸວົງ; ເຊິ່ງຄຳຖາມແຕ່ລະຂໍ້ເປັນລັກສະນະມາດຕາສ່ວນປະເມີນຄ່າ (Rating Scale) 5 ລະດັບ (5,4,3,2,1) ປະກອບດ້ວຍ 6 ດ້ານ ໄດ້ແກ່: ດ້ານເນື້ອໃນຫຼັກສູດ, ດ້ານເທັກນິກການສອນ, ດ້ານການຈັດການຮຽນ-ການສອນ, ດ້ານການໃຊ້ສື່ການສອນ, ດ້ານສະພາບແວດລ້ອມການຮຽນ-ການສອນ ແລະ ດ້ານການວັດ ແລະ ປະເມີນຜົນ.

❖ໄລຍະເວລາທີ່ສຶກສາ

ການສຶກສາຄວາມຄິດເຫັນ ຂອງນັກສຶກສາລະດັບປະລິນຍາຕີຕໍ່ກັບການສຶກສາ ຢູ່ທີ່ມະຫາວິທະຍາໄລ ສຸພານຸວົງ ໃນຄັ້ງນີ້ ໃຊ້ເວລາ 10 ເດືອນ, ເຊິ່ງເລີ່ມປະຕິບັດແຕ່ເດືອນ ມັງກອນ ຫາ ຕຸລາ 2025.

*3.2 ການວິເຄາະຂໍ້ມູນ*

ການວິເຄາະຂໍ້ມູນໃນການສຶກສາຄົ້ນຄວ້າຄັ້ງນີ້ ແມ່ນນຳໃຊ້ໂປແກມສຳເລັດຮູບທາງສະຖິຕິ (IBM SPSS version 20) ເພື່ອຊອກຫາຄ່າຄວາມຖີ່, ສ່ວນຮ້ອຍ, ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ.

## 4. ຜົນການຄົ້ນຄວ້າ

ສຶກສາຄວາຄິດເຫັນຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນຂອງອາຈານ ຢູ່ທີ່ ມະຫາວິທະຍາໄລ ສຸພານຸວົງ ໃນຄັ້ງນີ້ ມີຜົນໄດ້ຮັບດັ່ງນີ້:

*4.1 ຜົນການວິເຄາະຂໍ້ມູນສ່ວນຕົວຂອງກຸ່ມຕົວຢ່າງ*

ກຸ່ມຕົວຢ່າງຈຳນວນ 226 ຄົນ ເຊິ່ງສະແດງອອກດັ່ງລຸ່ມນີ້:

**ຕາຕາລາງທີ 1:** ການວິເຄາະຂໍ້ມູນທົ່ວໄປຂອງນັກສຶກສາທີ່ຕອບແບບສອບຖາມ ກໍລະນີແຍກຕາມເພດ

| ເພດ | ຈຳນວນ(ຄົນ) | ສ່ວນຮ້ອຍ(%) |
|---|---|---|
| ຍິງ | 121 | 53.8 |
| ຊາຍ | 104 | 46.2 |
| ລວມ | 225 | 100.0 |

ຈາກຕາຕະລາງ 1 ເຫັນວ່າ: ກຸ່ມຕົວຢ່າງສ່ວນຫຼາຍແມ່ນເພດຍິງ ມີຈຳນວນ 121 ຄົນ ເທົ່າກັບ 53.8 ສ່ວນຮ້ອຍ ແລະ ເພດຊາຍມີ 104 ຄົນ ເທົ່າກັບ 46.2 ສ່ວນຮ້ອຍ.

**ຕາຕະລາງທີ 2:** ການວິເຄາະຂໍ້ມູນທົ່ວໄປຂອງນັກສຶກສາທີ່ຕອບແບບສອບຖາມ ກໍລະນີແຍກຕາມອາຍຸ

| ອາຍຸ (ປີ) | ຈຳນວນ(ຄົນ) | ສ່ວນຮ້ອຍ(%) |
|---|---|---|
| 18 | 23 | 10.2 |
| 19 | 37 | 16.4 |
| 20 | 61 | 27.1 |
| 21 | 47 | 20.9 |
| 22 | 31 | 13.8 |
| 23 | 16 | 7.1 |
| 24 | 8 | 3.6 |
| 25 | 2 | 0.9 |
| ລວມ | 225 | 100.0 |

ຈາກຕາຕະລາງ 2 ເຫັນວ່າ: ກຸ່ມຕົວຢ່າງທີ່ມີຈານວນຫຼາຍສຸດ ມີອາຍຸ 20 ປີ ມີ 61 ຄົນ ເທົ່າກັບ 27.1 ສ່ວນຮ້ອຍ, ຮອງລົງມາແມ່ນ ອາຍຸ 21 ປີ ມີ 47 ຄົນ ເທົ່າກັບ 20.9 ສ່ວນຮ້ອຍ , ອາຍຸ 19 ປີ ມີ 37 ຄົນ ເທົ່າກັບ 16.4 ສ່ວນຮ້ອຍ, ອາຍຸ 31 ມີ 22 ຄົນ ເທົ່າກັບ 13.8 ສ່ວນຮ້ອຍ, ອາຍຸ 18 ປີ ມີ 23 ຄົນ ເທົ່າກັບ 10.2 ສ່ວນຮ້ອຍ, ອາຍຸ 23 ປີ ມີ 16 ຄົນ ເທົ່າກັບ 7.1 ສ່ວນຮ້ອຍ, ອາຍຸ 24 ປີ ມີ 8 ຄົນ ເທົ່າກັບ 3.6 ສ່ວນຮ້ອຍ ແລະ ຕ່ຳສຸດແມ່ນອາຍຸ 25 ປີ ມີ 2 ຄົນ ເທົ່າກັບ 0.9 ສ່ວນຮ້ອຍຕາມລາດັບ.

**ຕາຕາລາງທີ 3:** ການວິເຄາະຂໍ້ມູນທົ່ວໄປຂອງນັກສຶກສາທີ່ຕອບແບບສອບຖາມ ກໍລະນີແຍກຕາມຊັ້ນຮຽນ

| ຊັ້ນຮຽນ | ຈຳນວນ(ຄົນ) | ສ່ວນຮ້ອຍ(%) |
|---|---|---|
| ປີທີ 2 | 33 | 14.7 |
| ປີທີ 3 | 79 | 35.1 |
| ປີທີ 4 | 105 | 46.7 |
| ປີທີ 5 | 8 | 3.6 |
| ລວມ | 225 | 100.0 |

ຈາກຕາຕາລາງທີ 3 ເຫັນວ່າ: ກຸ່ມຕົວຢ່າງ ທີ່ມີຈຳນວນຫຼາຍທີ່ສຸດແມ່ນປີທີ 4 ມີ 105 ຄົນ ເທົ່າກັບ 46.7 ສ່ວນຮ້ອຍ, ຮອງລົງມາແມ່ນປີທີ 3 ມີ 79 ຄົນ ເທົ່າກັບ 35.1 ສ່ວນຮ້ອຍ, ປີທີ 2 ມີ 33 ຄົນ ເທົ່າກັບ 14.7 ສ່ວນຮ້ອຍ ແລະ ໜ້ອຍທີ່ສຸດແມ່ນປີທີ 5 ມີ 8 ຄົນ ເທົ່າກັບ 3.6 ສ່ວນຮ້ອຍ ຕາມລຳດັບ.

**ຕາຕາລາງທີ 4:** ການວິເຄາະຂໍ້ມູນທົ່ວໄປຂອງນັກສຶກສາທີ່ຕອບແບບສອບຖາມ ກໍລະນີແຍກຕາມຄະນະວິຊາ

| ຊັ້ນຮຽນ | ຈຳນວນ(ຄົນ) | ສ່ວນຮ້ອຍ (%) |
|---|---|---|
| ຄະນະສຶກສາສາດ | 3 | 1.3 |
| ຄະນະພາສາສາດ | 48 | 21.3 |
| ຄະນະວິສະວະກຳສາດ | 59 | 26.2 |
| ຄະນະກະເສດສາດ ແລະ ຊັບພະຍາກອນປ່າໄມ້ | 19 | 8.4 |
| ຄະນະເສດຖະສາດ ແລະ ການທ່ອງທ່ຽວ | 78 | 34.7 |
| ຄະນະສະຖາປັດຕະຍະກຳສາດ | 18 | 8.0 |
| ລວມ | 225 | 100.0 |

ຈາກຕາຕາລາງທີ 5 ເຫັນວ່າ: ກຸ່ມຕົວຢ່າງທີ່ມີຈຳນວນຫຼາຍທີ່ສຸດແມ່ນນັກສຶກສາຄະນະເສດຖະສາດ ແລະ ການທ່ອງທ່ຽວ ມີ 78 ຄົນ ເທົ່າກັບ 34.7 ສ່ວນຮ້ອຍ, ຮອງລົງມາແມ່ນຄະນະວິສະວະກຳສາດ ມີ 59 ຄົນ ເທົ່າກັບ 26.2 ສ່ວນຮ້ອຍ, ຄະນະພາສາສາດ ມີ 48 ຄົນ ເທົ່າກັບ 21.3 ສ່ວນຮ້ອຍ, ຄະນະກະເສດສາດ ແລະ ຊັບພະຍາກອນປ່າໄມ້ ມີ 19 ຄົນ ເທົ່າກັບ 8.4 ສ່ວນຮ້ອຍ, ຄະນະສະຖາປັດຕະຍະກຳສາດ ມີ 18 ຄົນ ເທົ່າກັບ 8.0 ສ່ວນຮ້ອຍ ແລະ ໜ້ອຍທີ່ສຸດແມ່ນຄະນະສຶກສາສາດ ມີ 3 ຄົນ ເທົ່າກັບ 1.3 ສ່ວນຮ້ອຍ ຕາມລຳດັບ.

*4.2 ທັດສະນະຄະຕິຂອງນັກສຶກສາ*

ທັດສະນະຄະຕິຂອງນັກສຶກສາລະດັບປະລິນຍາຕີຕໍ່ກັບການຈັດການຮຽນ-ການສອນຂອງອາຈານຢູ່ທີ່ມະຫາວິທະຍາໄລ ສຸພານຸວົງແມ່ນຢູ່ໃນລະດັບດີ ($\bar{X} = 3.56,\ SD = 0.58$), ເມື່ອພິຈາລະນາເປັນຫຼາຍດ້ານພົບວ່າ:

1.) ດ້ານເນື້ອໃນຫຼັກສູດ

ການຈັດການຮຽນ-ການສອນຂອງອາຈານທີ່ມະຫາວິທະຍາໄລສຸພານຸວົງໂດຍອີງໃສ່ດ້ານເນື້ອໃນຫຼັກສູດໂດຍພາບລວມແມ່ນຢູ່ໃນລະດັບດີ ( $\bar{X} = 3.59,\ SD = 0.60$)

2.) ດ້ານເທັກນິກການສອນ

ການຈັດການຮຽນ-ການສອນຂອງອາຈານທີ່ມະຫາວິທະຍາໄລ ສຸພານຸວົງ ໂດຍອີງໃສ່ດ້ານເທັກນິກການສອນໂດຍພາບລວມແມ່ນຢູ່ໃນລະດັບດີ ($\bar{X} = 3.58,\ SD = 0.65$).

3.) ດ້ານການຈັດກິດຈະກຳການຮຽນ-ການສອນ

ການຈັດການຮຽນ-ການສອນຂອງອາຈານທີ່ມະຫາວິທະຍາໄລ ສຸພານຸວົງ ໂດຍອີງໃສ່ດ້ານການຈັດກິດຈະກຳການຮຽນ-ການສອນໂດຍພາບລວມແມ່ນຢູ່ໃນລະດັບດີ ( $\bar{X} = 3.57,$ $SD = 0.60$)

4.) ດ້ານການໃຊ້ສື່ການສອນ

ການຈັດການຮຽນ-ການສອນຂອງອາຈານທີ່ມະຫາວິທະຍາໄລ ສຸພານຸວົງ ໂດຍອີງໃສ່ດ້ານການຈໃຊ້ສື່ການຮຽນ-ການສອນຢູ່ໃນລະດັບດີ ( $\bar{X} = 3.54,\ SD = 0.69$)

5.) ດ້ານສະພາບແວດລ້ອມການຮຽນ-ການສອນ

ການຈັດການຮຽນ-ການສອນຂອງອາຈານທີ່ມະຫາວິທະຍາໄລ ສຸພານຸວົງ ໂດຍອີງໃສ່ດ້ານການຈັດສະພາບແວດລ້ອມການຮຽນ-ການສອນຢູ່ໃນລະດັບປານກາງ ( $\bar{X} = 3.50,\ SD = 0.73$)

6.) ດ້ານການວັດ ແລະ ປະເມີນຜົນ

ການຈັດການຮຽນ-ການສອນຂອງອາຈານທີ່ມະຫາວິທະຍາໄລ ສຸພານຸວົງ ໂດຍອີງໃສ່ດ້ານການວັດ ແລະ ປະເມີນຜົນຢູ່ໃນລະດັບດີ ( $\bar{X} = 3.61,\ SD = 0.67$)

## 5. ອະພິປາຍຜົນ

ຄວາມຄິດເຫັນຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນຂອງອາຈານຢູ່ທີ່ ມະຫາວິທະຍາໄລ ສຸພານຸວົງ

*5.1 ດ້ານເນື້ອໃນຫຼັກສູດ*

ຄວາມຄິດເຫັນຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນຂອງອາຈານຢູ່ທີ່ ມະຫາວິທະຍາໄລ ສຸພານຸວົງ ດ້ານເນື້ອໃນຫຼັກສູດໂດຍລວມຢູ່ໃນລະດັບດີ ເນື່ອງຈາກວ່າ: ເນື້ອໃນທີ່ນຳມາສອນນັ້ນມີຄວາມຄຳນຶງເຖິງຄວາມຍາກງ່າຍໃຫ້ແທດເໝາະກັບຄວາມສາມາດຂອງຜູ້ຮຽນ ແລະ ມີຄວາມຕໍ່ເນື່ອງກັບຄວາມຮູ້ພື້ນຖານເດີມຂອງຜູ້ຮຽນ ຖ້າຫາກເນື້ອໃນທີ່ນຳມາສອນມີຄວາມງ່າຍເກີນໄປ ຜູ້ຮຽນກໍ່ຈະບໍ່ເກີດຄວາມຮູ້ແຕ່ຢ່າງໃດແຕ່ກົງກັນຂ້າມຖ້າຫາກເນື້ອໃນທີ່ນຳມາສອນມີຄວາມຍາກເກີນໄປ ກໍ່ເຮັດໃຫ້ການຮຽນຮູ້ເກີດຂຶ້ນດ້ວຍຄວາມລຳບາກ ດັ່ງນັ້ນ ຜູ້ສອນຕ້ອງພິຈາລະນາເນື້ອໃນທີ່ນຳມາສອນໃຫ້ມີຄວາມເໝາະສົມ ແລະ ພິຈາລະນາວ່າເປັນເນື້ອໃນປະເພດໃດໃນປະເພດເຫຼົ່ານີ້: 1.) ຄວາມເປັນຈິງ ແລະ ຄວາມຮູ້ທຳມະດາ, 2.) ຄວາມຄິດລວມຍອດ ແລະ ຫຼັກການ, 3.) ການແກ້ບັນຫາ ແລະ ຄວາມຄິດສ້າງສັນ, 4.) ທັກສະທາງກາຍ ແລະ ເນື້ອໃນການຮຽນ-ການສອນ ເຊິ່ງສອດຄ່ອງກັບງານວິໄຈຂອງ (ພຣະຄຳ ແສງຄັນທະສີລິ, 2011) ໄດ້ສຶກສາກ່ຽວກັບການຈັດການຮຽນ-ການສອນຕາມຫຼັກສູດຢູ່ທີ່ ວິທະຍາໄລເຕັກນິກ ປາກປ່າສັກ ນະຄອນຫຼວງວຽງຈັນ, ການຄົ້ນຄວ້າໃນຄັ້ງນີ້ມີຈຸດປະສົງ: 1) ເພື່ອສຶກສາການຈັດການຮຽນ-ການສອນຫຼັກສູດ, 2) ເພື່ອປຽບທຽບລະດັບຄວາມຄິດເຫັນຕໍ່ການຮຽນ-ການສອນ, 3) ເພື່ອສຶກສາບັນຫາ ແລະ ວິທີແກ້ໄຂໃນການຮຽນ-ການສອນ. ຈາກຜົນການສຶກສາໄດ້ພົບວ່າ: ນັກສຶກສາມີຄວາມຄິດເຫັນກ່ຽວກັບດ້ານເນື້ອໃນຫຼັກສູດ ໃນລະດັບຫຼາຍ.

*5.2 ດ້ານເທັກນິກການສອນ*

ຄວາມຄິດເຫັນຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນຂອງອາຈານຢູ່ທີ່ ມະຫາວິທະຍາໄລ ສຸພານຸວົງ ດ້ານເທັກນິກການສອນ ໂດຍລວມແມ່ນຢູ່ໃນລະດັບດີ ເທັກນິກການສອນນັ້ນພົບວ່າຂັ້ນຕອນການສອນ, ວິທີການສອນ ຫຼື ວິທີດຳເນີນການສອນນັ້ນຕ້ອງໃຊ້ເທັກນິກການສອນທີ່ມີຄຸນນະພາບ ແລະ ປະສິດທິພາບຫຼາຍຂຶ້ນ ເຊັ່ນການຍົກຕົວຢ່າງການໃຊ້ສື່ ແລະ ການໃຊ້ຄຳຖາມເປັນຕົ້ນ ເທັກນິກການສອນຈຶ່ງເປັນສິ່ງທີ່ສຳຄັນທີ່ຜູ້

ສອນຈະຕ້ອງຮູ້ຈັກທີ່ຈະກຽມ ແລະ ຈະຕ້ອງໃຊ້ໃນການຮຽນ-ການສອນເພາະເທັກນິກການສອນເປັນສ່ວນທີ່ສຳຄັນທີ່ຈະຊ່ວຍໃຫ້ການຮຽນ-ການສອນຂອງຜູ້ສອນມີປະສິດທິພາບ ເຊິ່ງສອດຄ່ອງກັບບົດວິໄຈຂອງ (Kitja Wesprachum, 2552)ໄດ້ສຶກສາຄົ້ນຄວ້າກ່ຽວກັບບັນຫາ ແລະ ຄວາມຕ້ອງການການຮຽນຮູ້ການສອນຫຼັກສູດວິຊາຊີບໄລຍະສັ້ນທີ່ວິທະຍາໄລ ສາລະພັດຊ່າງ ຜົນໄດ້ຮັບຂອງການຄົ້ນຄວ້ານີ້ເຮັດໃຫ້ເຂົ້າໃຈຄວາມຮັບຮູ້ຂອງຜູ້ບໍລິຫານ, ຄູອາຈານ ແລະ ນັກຮຽນກ່ຽວກັບເງື່ອນໄຂ, ບັນຫາ ແລະ ຄວາມຕ້ອງການການຮຽນ-ການສອນວິຊາຊີບໄລຍະສັ້ນ ທີ່ວິທະຍາໄລເຕັກນິກບາງກອກ ໃນ 6 ຂົງເຂດນັ້ນຈາກຜົນການສຶກສາໄດ້ພົບວ່າ: ນັກສຶກສາມີຄວາມຄິດເຫັນກ່ຽວກັບດ້ານເທັກນິກການສອນ ໃນລະດັບຫຼາຍ.

*5.3 ດ້ານກິດຈະກຳການຮຽນ-ການສອນ*

ຄວາມຄິດເຫັນຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນຂອງອາຈານຢູ່ທີ່ ມະຫາວິທະຍາໄລ ສຸພານຸວົງ ດ້ານເທັກນິກການຈັດກິດຈະກຳການຮຽນ-ການສອນ ໂດຍລວມແມ່ນຢູ່ໃນລະດັບດີ ເນື່ອງຈາກວ່າ: ການຈັດການຮຽນ-ການສອນ ທີ່ມີສ່ວນຮ່ວມກັບນັກຮຽນການສົນທະນາໃນຫ້ອງຮຽນ ມີການສຶກສານອກສະຖານທີ່ບາງຄັ້ງຄາວເພື່ອປ່ຽນບັນຍາກາດການຮຽນ-ການສອນ, ແລະ ເນື້ອໃນຂອງບົດຮຽນນັ້ນໆ ມັນຕ້ອງໄດ້ຮັບການຈັດລຽງໃນວິທີການທີ່ເຫມາະສົມການຈັດກິດຈະກຳການຮຽນ-ການສອນນັກຮຽນຈະຮຽນໄດ້ດີເທົ່າໃດແມ່ນຂຶ້ນກັບກິດຈະກຳການຮຽນ-ການສອນຂອງອາຈານໃນການຈັດ ຕັ້ງການຮຽນ-ການສອນຕ້ອງໄດ້ຈັດຕັ້ງໃຫ້ສອດຄ່ອງກັບຫຼັກສູດ ເຊິ່ງສອດຄ່ອງກັບບົດວິໄຈຂອງ (ອຸດົມ ໄຊແກ້ວວົງ, 2560) ໄດ້ສຶກສາກ່ຽວກັບການສອນຄອນມາຈາກສະຖານະການບັນຫາ ແລະ ຄວາມຕ້ອງການຂອງນັກຮຽນ ຢູ່ທີ່ມະຫາວິທະຍາໄລ ຣາມຄຳແຫງ ຈາກຜົນການສຶກສາພົບວ່າ: ການຈັດການຮຽນ-ການສອນຈະຕ້ອງມີການວາງແຜນຮ່ວມກັນລະຫວ່າງນັກຮຽນ ແລະ ອາຈານກ່ອນຈະເລີ່ມເຮັດກິດຈະກຳການຮຽນ-ການສອນ ຜູ້ຮຽນຕ້ອງມີຄວາມເຂົ້າໃຈ ໃນຈຸດປະສົງການຮຽນຮູ້, ກິດຈະກຳການຮຽນຮູ້ຕ້ອງມີການໃຊ້ກິດຈະກຳທີ່ຫຼາກຫຼາຍ ໂດຍທີ່ຜູ້ຮຽນສາມາດສ້າງຂຶ້ນເອງ ແລະ ຄວນມີການອະທິບາຍທີ່ຫຼີລ້ຽງເວລາທີ່ຕາຍຕົວ ແລະ ຈະຕ້ອງມີການກວດສອບຂໍ້ມູນທີ່ຊັດເຈນ.

*5.4 ດ້ານການໃຊ້ສື່ການສອນ*

ຄວາມຄິດເຫັນຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນຂອງອາຈານຢູ່ທີ່ ມະຫາວິທະຍາໄລ ສຸພານຸວົງ ດ້ານການນຳໃຊ້ສື່ການສອນ ໂດຍລວມແມ່ນຢູ່ໃນລະດັບດີ ການໃຊ້ສື່ການສອນແມ່ນສື່ກາງ ໃນການຖ່າຍທອດເລື່ອງເນື້ອໃນຈາກຜູ້ສົ່ງໄປຫາຜູ້ຮັບ ແລະ ຖ່າຍທອດຄວາມຮູ້ຈາກຄູສອນໃຫ້ນັກຮຽນເຮັດໃຫ້ນັກຮຽນໄດ້ຮຽນຮູ້ຕາມຈຸດປະສົງການຊ່ວຍເຫຼືອນັກຮຽນໄດ້ຮັບປະສົບການໂດຍກົງ ເຮັດໃຫ້ສິ່ງຕ່າງໆ ສິ່ງທີ່ບໍ່ມີຕົວຕົນທີ່ຍາກທີ່ຈະເຂົ້າໃຈໄດ້ກາຍເປັນສິ່ງທີ່ແນ່ນອນທີ່ງ່າຍສຳລັບນັກຮຽນທີ່ຈະເຂົ້າໃຈການຮຽນຮູ້ງ່າຍ, ໄວ, ມ່ວນຊື່ນ ແລະ ຊ່ວຍກະຕຸ້ນຄວາມສົນໃຈ, ຄວາມເຂົ້າໃຈ ແລະ ການຮຽນຮູ້ຂອງນັກຮຽນ ແລະ ຊ່ວຍສົ່ງເສີມການຮຽນຮູ້ເພື່ອນຳໃຊ້ສື່ການສອນຢ່າງມີປະສິດທິຜົນ, ມັນເປັນສິ່ງຈຳເປັນໃຊ້ສື່ ທີ່ເໝາະສົມກັບອາຍຸຂອງນັກສຶກສາ ເຊິ່ງສອດຄ່ອງກັບບົດວິໄຈຂອງ (ສັກກະລິນ ຢູ່ຜ່ອງ, 2555)ໄດ້ສຶກສາກ່ຽວກັບ "ການພັດທະນາຫຼັກສູດຝຶກອົບຮົມການສ້າງແຜນການສອນທີ່ໃຊ້ສື່ຮູບພາບການເຄື່ອນໄຫວສຳລັບວິຊາຊີບ ເຊິ່ງສາມາດນຳໄປໃຊ້ຝຶກອົບຮົມຄູ ແລະ ສຳລັບອາຊີບອຸດສາຫະກຳຢ່າງມີປະສິດທິຜົນຕາມການຄາດຄະເນທີ່ໄດ້ວາງໄວ້ ໂດຍຜົນການວິເຄາະຂໍ້ມູນ ນັກຄົ້ນຄວ້າໄດ້ດຳເນີນການຄົ້ນຄ້ວາໂດຍການປະເມີນຜົນການພັດທະນາຫຼັກສູດການຝຶກອົບຮົມໃນທຸກຂັ້ນຕອນແມ່ນໄດ້ປະຕິບັດໂດຍນຳໃຊ້ຮູບແບບການປະເມີນຜົນ CIPPມາປະເມີນທຸກຂັ້ນຕອນ. ຈາກການສຶກສາພົບວ່າ: ການໃຊ້ສື່ໂດຍໃຊ້ຮູບພາບປະກອບເຂົ້າໃນການຈັດການຮຽນ-ການສອນ ແມ່ນຢູ່ໃນລະດັບຫຼາຍ.

*5.5 ດ້ານສະພາບແວດລ້ອມການຮຽນ-ການສອນ*

ຄວາມຄິດເຫັນຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນຂອງອາຈານຢູ່ທີ່ ມະຫາວິທະຍາໄລ ສຸພານຸວົງ ດ້ານການສ້າງສະພາບແວດລ້ອມການຮຽນ-ການສອນ ໂດຍລວມແມ່ນຢູ່ໃນລະດັບປານກາງ ການຈັດສະພາບແວດລ້ອມການຮຽນ-ການສອນມີຜົນກະທົບຕໍ່ການຮຽນຮູ້ ແລະ ປະສິດທິພາບຂອງການຮຽນ-ການສອນມີຄວາມສຳຄັນຫຼາຍ ເພາະຈະຊ່ວຍສົ່ງເສີມການຮຽນຂອງນັກຮຽນມີປະສິດທິ ພາບຫຼາຍມັນມີຜົນດີຕໍ່ການຮຽນ-ການສອນ. ແຕ່ກົງກັນຂ້າມຖ້າຫາກວ່າສະພາບແວດລ້ອມບັນຍາກາດການຮຽນ-ການສອນອ້ອມຂ້າງຜູ້ຮຽນບໍ່ເໝາະສົມ ຫຼື ເຂົາເຈົ້າປະສົບກັບບັນຫາໃນການຮຽນ-ການສອນຈະລົ້ມເຫລວແນ່ນອນ ເຊິ່ງສອດຄ່ອງກັບການວິໄຈຂອງ (Piyawan SICHIANG, 2556) ໄດ້ສຶກສາທັດສະນະຄະຕິຂອງທີ່ມີຕໍ່ສະພາບແວດລ້ອມຂອງຄະນະອຸດສາຫະກຳເຄື່ອງທໍຜ້າ ແລະ ອອກແບບແຟຊັ່ນ ມະຫາວິທະຍາໄລ ເຕັກໂນໂລຍີ ຣາຊະມົງຄຸນພະນະຄອນ ຈາກຜົນການສຶກສາໄດ້ພົບວ່າ: ນັກສຶກສາລະດັບປະລິນຍາຕີມີຄວາມຄິດ

ເຫັນກ່ຽວກັບ ດ້ານອາຄານສະຖານທີ່ ແລະ ສິ່ງອຳນວຍຄວາມສະດວກ ໃນລະດັບປານກາງ.

*5.6 ດ້ານການວັດ ແລະ ປະເມີນຜົນ*

ຄວາມຄິດເຫັນຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນຂອງອາຈານຢູ່ທີ່ ມະຫາວິທະຍາໄລ ສຸພານຸວົງ ດ້ານການປະເມີນຜົນໂດຍລວມ ແມ່ນຢູ່ໃນລະດັບການດີ ການວັດປະເມີນຜົນ ແມ່ນການກຳນົດມູນຄ່າ ຫຼື ລາຄາຈາກຄະແນນທີ່ໄດ້ຈາກການວັດແທກນັ້ນເຊັ່ນ: ດີ ຫຼື ບໍ່ດີ, ເກັ່ງ ຫຼື ບໍ່ເກັ່ງ ເມື່ອໄດ້ຄະແນນຈາກການປະເມີນແລ້ວຍັງບອກບໍ່ໄດ້ເທື່ອວ່ານັກຮຽນຈະຮຽນເກັ່ງ ຫຼື ບໍ່ເກັ່ງຈະຕ້ອງໃຊ້ວິພາກວິຈານເພື່ອພິຈາລະນາຕື່ມອີກໂດຍການປຽບທຽບຄົນອື່ນໆທີ່ຢູ່ໃນຫ້ອງດຽວກັນການວັດ ແລະ ການປະເມີນຜົນແມ່ນມີຄວາມຈຳເປັນໃນຂະບວນການຮຽນຮູ້ການສອນໂດຍການວັດ ແລະ ການປະເມີນຜົນໄດ້ຮັບຈະຊ່ວຍສ້າງຜົນປະໂຫຍດ ເຊິ່ງສອດຄ່ອງກັບການວິໄຈຂອງ (Miss Kewalee Phungdee, 2556)ໄດ້ສຶກສາຄວາມເພິ່ງພໍໃຈທີ່ມີຕໍ່ການຈັດການຮຽນ - ການສອນໃນຫຼັກສູດຂອງພາກວິຊາສະຖິຕິ ຄະນະວິທະຍາສາດ ມະຫາວິທະຍາໄລຂອນແກ່ນ. ຈາກຜົນການສຶກສາໄດ້ພົບວ່າ: ທັງໝົດ 5 ດ້ານແມ່ນຢູ່ໃນລະດັບດີ, (1 ດ້ານຫຼັກສູດ, 2 ດ້ານວິທີການສິດສອນ ແລະ ການເຄື່ອນໄຫວການຮຽນການສອນ, 3 ດ້ານຄູສອນ, 4 ດ້ານການວັດແທກ ແລະ ປະເມີນຜົນການຮຽນ-ການສອນ ແລະ 5 ດ້ານປັດໄຈສະໜັບສະໜູນການຮຽນ - ການສອນ).

## 6. ສະຫຼຸບຜົນ

ຜົນການສຶກສາທັດສະນະຄະຕິຂອງນັກສຶກສາສາຕໍ່ກັບການຈັດການຮຽນ-ການສອນຂອງອາຈານ ທີ່ມະຫາວິທະຍາໄລ ສຸພານຸວົງ. ເມື່ອພິຈາລະນາເປັນລາຍດ້ານພົບວ່າ: ດ້ານເນື້ອໃນຫຼັກສູດ, ດ້ານເທັກນິກການສອນ, ດ້ານການຈັດກິດຈະກຳການຮຽນ-ການສອນ, ດ້ານການໃຊ້ສື່ການສອນ ແລະ ດ້ານການວັດປະເມີນຜົນ ຢູ່ໃນເກນລະດັບຫຼາຍ; ສ່ວນດ້ານສະພາບແວດລ້ອມການຮຽນ-ການສອນ ແມ່ນຢູ່ໃນລະດັບປານກາງ ໂດຍລວມແລ້ວລະດັບຄວາມຄິດເຫັນຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນຂອງອາຈານຢູ່ທີ່ ມະຫາວິທະຍາໄລ ສຸພານຸວົງ ໃນອົງປະກອບ 6 ດ້ານແມ່ນຢູ່ໃນລະດັບດີ.

## 7. ຂໍ້ຈຳກັດຂອງການຄົ້ນຄວ້າ

ຂໍ້ສະເໜີທີ່ໄດ້ຈາກການສຶກສາຄວາມຄິດເຫັນຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນຂອງອາຈານຢູ່ທີ່ມະຫາວິທະຍາໄລ ສຸພານຸວົງ ໃນຄັ້ງນີ້ສາມາດສະຫຼຸບໄດ້ດັ່ງນີ້:

1.) ຄູຄວນມີຄວາມຮູ້ ແລະ ເຂົ້າໃຈກ່ຽວກັບຫຼັກສູດໃຫ້ເລິກເຊິ່ງ
2.) ຄູຄວນມີເທັກນິກການສອນທີ່ຫຼາກຫຼາຍ
3.) ຄູຄວນຈັດກິດຈະກຳໃຫ້ນັກສຶກສາມີສ່ວນຮ່ວມໃນການສົນທະນາໃນຫ້ອງຮຽນ
4.) ຄູຄວນໃຊ້ສື່ການສອນທີ່ທັນສະໄໝປະກອບເຂົ້າການບັນຍາຍໃນເວລາສອນ
5.) ຄູສອນບາງຄົນຄວນມີຄວາມຍຸດຕິທຳຕໍ່ການປະເມີນຜົນການຮຽນໃຫ້ຫຼາຍກວ່າເກົ່າ
6.) ຄູສອນບາງຄົນຄວນປະຕິບັດເວລາ ແລະ ອະທິບາຍບົດຮຽນໃຫ້ນັກສຶກສາເຂົ້າໃຈງ່າຍຂຶ້ນກວ່າເກົ່າ
7.) ໃນຫ້ອງຮຽນຄວນມີແສງສະຫວ່າງ ແລະ ມີອາກາດຖ່າຍເທໄດ້ສະດວກ, ຫ້ອງສະມຸດຄວນມີໜັງສືທີ່ພຽງພໍ ແລະ ຫຼາກຫຼາຍຕໍ່ກັບການສຶກສາຄົ້ນຄວ້າ

## 8. ຂໍ້ສະເໜີ

1.) ຄວນສຶກສາປຽບທຽບຄວາມຄິດເຫັນຂອງນັກສຶກສາແຕ່ລະຄະນະຕໍ່ກັບການຈັດການຮຽນ-ການສອນຂອງອາຈານທີ່ມະຫາວິທະຍາໄລ ສຸພານຸວົງ.
2.) ຄວນສຶກສາດ້ານການປະກອບອາຊີບຂອງນັກສຶກສາພາຍຫຼັງຮຽນຈົບ.

## 9. ເອກະສານອ້າງອີງ


Kitja Wesprachum. (2552). *The magic is the magic of the magic. The meaning of the word - the name of the word. In the end, there is no danger.* Thailand.

Miss Kewalee Phungdee. (2556). *Students' satisfaction with teaching and learning management in the course of the Department of statistics Faculty of science Khon Kaen University year 2013.* Thailand: Khon Kaen University.

Phra Surachai Surachayo (Hongtrakool). (2555). *STUDENT'S ATTITUDES TOWARD TEACHING AND LEARNING OF MORAL TEACHING MONKS IN THE PRIMARY SCHOOLS MUANG DISTRICT NONTHABURI PROVINCE.* Thailand: NONTHABURI PROVINCE.

Piyawan SICHIANG. (2556). *THE ENVIRONMENT OF THE FACULTY OF INDUSTRIAL TEXTILES AND FASHION DESIGN AT RAJAMANGALA UNIVERSITY OF TECHNOLOGY PHRANAKNON AS PERCEIVED BY UNDERGRADUATE STUDENTS.* Thailand: UNIVERSITY OF TECHNOLOGY PHRANAKNON AS PERCEIVED.

Thomas and Montgomery (1998). (1998). *ສຶກສາກ່ຽວກັບການເປັນຄູສອນທີ່ດີ.* ມະຫາວິທະຍາໄລ ຂ່ອນແກ່ນ.

ກະຊວງສຶກສາທິການ ແລະ ກິລາ . (2020). *ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ່ IX (2021-2025).* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ. (2020). *ບົດສະຫຼຸບການ ຈັດຕັ້ງປະຕິບັດແຜນພັດທະນາ ປະຈຳປີ 2019 ແລະ ແຜນການ ປະຈຳປີ 2020 ຂອງຂະແໜງການຍ່ອຍ.* ມະຫາວິທະຍາໄລແຫ່ງຊາດ ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ ແລະ ກິລາ. (2020). *ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII (2016-2020).* ນະຄອນຫຼວງວຽງຈັນ.

ກົດໝາຍວ່າດ້ວຍການສຶກສາ ສະບັບປັບປຸງ. (2015). *ມາດຕາ 4: ນະໂຍບາຍກ່ຽວກັບການສຶກສາ.* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ສິນໄລ ອໍ່ຕ່ອງຫ້ອນ ແລະ ມະນີວັນ ຈັນທະບຸນເຮືອງ. (2015). *ສຶກສາທັດສະນະຄະຕິຂອງນັກຮຽນຫ້ອງພອນສະຫ້ວນທີ່ມີຕໍ່ວິຊາຄະນິດສາດຊັ້ນມັດທະຍົມຕອນປາຍ.* ແຂວງຫຼວງພະບາງ.

ສັກກະລິນ ຢູຜ່ອງ. (2555). *ໄດ້ສຶກສາການພັດທະນາຫຼັກສູດຝຶກອົບຮົມການສ້າງແຜນການສອນໂດຍໃຊ້ຮູບແບບຮູບພາບການເຄື່ອນໄຫວສໍາລັບວິຊາຊີບ ສາຂາອຸດສາຫະກໍາ.* ປະເທດໄທ.

ພຣະຄໍາ ແສງຄັນທະສີລິ. (2011). *ສຶກສາການຈັດການຮຽນ-ການສອນຕາມຫຼັກສູດວິຊາຊີບ ວິທະຍາໄລເຕັກນິກ ປາກປ່າສັກ.* ນະຄອຫຼວງວຽງຈັນ.

ມະຫາວິທະຍາໄລ ສຸພານຸວົງ. (2024). *ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາປະຈຳສົກສຶກສາ 2023 - 2024 ແລະທິດທາງແຜນພັດທະນາການສຶກສາ ປະຈຳສົກສຶກສາ 2024 - 2025.* ມະຫາວິທະຍາໄລ ສຸພານຸວົງ.

ວິໄສທັດຮອດປີ 2030 ແລະ ຍຸດທະສາດ ການພັດທະນາເສດຖະກິດ - ສັງຄົມ ໄລຍະ 10 ປີ (2016-2025). (2016). *ຍຸດທະສາດເພື່ອບັນລຸບັນດາເປົ້າໝາຍຫຼຸດພົ້ນຈາກສະຖານະພາບຄວາມດ້ອຍພັດທະນາ (LDCs) ໃນປີ 2020 ແລະ ປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ (SDGs).* ກະຊວງແຜນການ ແລະ ການລົງທຶນ.

ໜຽວ ສີລາວົງ. (2012). *ສຶກສາຄວາມເພິ່ງພໍໃຈກັບສະພາບແວດລ້ອມການຮຽນຮູ້ຂອງນັກສຶກສາວິທະຍາໄລຊີວະສຶກສາຂັ້ນພື້ນຖານ.* ນະຄອນຫຼວງວຽງຈັນ.

ອຸດົມ ໄຊແກ້ວວົງ. (2560). *ສຶກສາການຈັດການຮຽນ-ການສອນຄວນມາຈາກສະຖານະການບັນຫາ ແລະ ຄວາມຕ້ອງການຂອງນັກຮຽນຢູ່ທີ່ ມະຫາວິທະຍາໄລ ຣາມຄໍາແຫງ.* . ປະເທດໄທ.

ແສງດາລາ ບົວລາຄໍາ. (2020). *ສຶກສາປັດໄຈຄວາມເພິ່ງພໍໃຈຂອງນັກສຶກສາ ຄະນະສຶກສາສາດ ຕໍ່ການບໍລິຫານຈັດການ ຂອງຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ* . ມະຫາວິທະຍາໄລແຫ່ງຊາດ: ມະຫາວິທະຍາໄລແຫ່ງຊາດ.